ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0278

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ...............0278/ກປ

ນະຄອນຫຼວງວຽງຈັນ, ວັນທີ 19 FEB 2020

## ຄຳແນະນຳ

## ກ່ຽວກັບ ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະສະເພາະກິດ ກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ

- ອີງຕາມ ດຳລັດ ຂອງລັດຖະບານ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ເລກທີ 2281/ກປຝ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງກົມນະໂຍບາຍ ແລະນິຕິກຳ ເລກທີ 620/ກບນ, ລົງວັນທີ 17 ຕຸລາ 2019.

ພາຍຫຼັງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການ ໃນທ້າຍປີ 2017 ເປັນຕົ້ນມາ, ເຖິງແມ່ນວ່າ ຂະແໜງການປູກຝັງ ແຕ່ສູນກາງຮອດທ້ອງຖິ່ນ ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ ແຕ່ຂັ້ນສູນກາງລົງສູ່ທ້ອງຖິ່ນກໍຕາມ, ແຕ່ຍັງເຫັນວ່າຢູ່ຫຼາຍທ້ອງຖິ່ນ ຍັງມີການລັກລອບນຳເຂົ້າ, ຈຳໜ່າຍ ຫຼື ນຳໃຊ້ຢາປາບສັດຕູພືດ ໂດຍສະເພາະຍັງມີການຈຳໜ່າຍຢາປາບສັດຕູພືດ ທີ່ນອນໃນບັນຊີປະເພດຫ້າມນຳໃຊ້, ຢາປາບສັດຕູພືດບໍ່ໄດ້ຂຶ້ນທະບຽນ, ບໍ່ຕິດສະຫຼາກເປັນພາສາລາວ ແລະ ຈຳໜ່າຍຢາປາບສັດຕູພືດ ປົນເປກັບເຄື່ອງອຸປະໂພກ ແລະ ບໍລິໂພກ, ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບຜູ້ຈຳໜ່າຍ, ຜູ້ນຳໃຊ້, ສິ່ງແວດລ້ອມ ແລະ ມີການກະທຳຜິດຊ້ຳຄືນຫຼາຍຄັ້ງ, ຊຶ່ງມີລັກສະນະຮຸນແຮງ ເຮັດໃຫ້ບາງແຂວງ ແລະ ເມືອງ ໄດ້ສ້າງຄະນະສະເພາະກິດແຕ່ລະຂັ້ນຂຶ້ນ ໂດຍປະກອບມີຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ ເພື່ອກວດກາແກ້ໄຂປະກົດການຫຍໍ້ທໍ້ດັ່ງກ່າວ ກ່ຽວກັບ ຢາປາບສັດຕູພືດ, ແຕ່ການເຄື່ອນໄຫວຂອງຄະນະສະເພາະກິດດັ່ງກ່າວເຫັນວ່າ

ຍັງບໍ່ທັນມີຄວາມເປັນເອກະພາບກັນ ລະຫວ່າງແຂວງ ແລະ ເມືອງ, ຍັງມີລັກສະນະຊໍ້າຊ້ອນກັບວຽກງານ ກວດກາຢາປາບສັດຕູພືດແບບປົກກະຕິ.

ຍ້ອນເຫັນໄດ້ຄວາມສຳຄັນ ແລະ ຈຳເປັນໃນການສ້າງຕັ້ງຄະນະສະເພາະກິດ ເພື່ອໃຫ້ມີກວດກາບັງຄັບ ໃຊ້ລະບຽບກົດໝາຍ ກ່ຽວກັບຢາປາບສັດຕູພືດ ໃຫ້ເຂັ້ມງວດຂຶ້ນກວ່າເກົ່າ ແລະ ໃຫ້ມີຄວາມເປັນເອກະ ພາບໃນຂອບເຂດທົ່ວປະເທດ ໂດຍສະເພາະມາດຕະການຕໍ່ຜູ້ລະເມີດທີ່ມີລັກສະນະຮ້າຍແຮງ ຊຶ່ງດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ແລະ ກົດໝາຍທີ່ກ່ຽວຂ້ອງ ໄດ້ກຳນົດໃຫ້ແກ້ໄຂດ້ວຍມາດຕະ ການປັບໃໝ ຫຼື ລົງໂທດທາງອາຍາ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:**

## I. ຈຸດປະສົງ ແລະ ລະດັບຄາດໝາຍ

ເພື່ອແນະນຳການຈັດຕັ້ງປະຕິບັດ ມາດຕາ 58 ວ່າດ້ວຍອົງການກວດກາຢາປາບສັດຕູພືດ ຂອງ ດຳລັດ ວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 ແລະ ມາດຕາ 48 ວ່າດ້ວຍການແກ້ໄຂຜົນການກວດກາຂອງ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງການດຳເນີນທຸລະກິດຢາປາບ ສັດຕູພືດ ເລກທີ 0238/ກປ, ລົງວັນທີ 14 ກຸມພາ 2019 ໂດຍສະເພາະທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດຄວາມຮັບຜິດຊອບ ລວມທັງວິທີການ, ຂັ້ນຕອນການສ້າງຕັ້ງຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບຢາປາບສັດຕູພືດ ແລະ ກົນໄກການປະ ສານງານ ລະຫວ່າງ ຂະແໜງການກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ລະອຽດ, ຈະແຈ້ງ ແລະ ຮັບປະກັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນດີ.

## II. ເນື້ອໃນ

### 2.1. ທີ່ຕັ້ງ, ພາລະບົດບາດ, ຂອບເຂດ ແລະ ຄວາມຮັບຜິດຊອບ ຂອງຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບຢາປາບສັດຕູພືດ

ຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ, ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ເຈົ້າເມືອງ ຕາມການແບ່ງຂັ້ນຄຸ້ມຄອງ, ມີພາລະບົດບາດໃນການບັງຄັບໃຊ້ມາດຕະການຕໍ່ຜູ້ລະເມີດລະບຽບ ກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ທີ່ບໍ່ຊໍ້າຊ້ອນກັບ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາ ຢາປາບສັດຕູພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງດຳລັດ ວ່າດ້ວຍ ການຄຸ້ມຄອງຢາ ປາບສັດຕູພືດ ເລກທີ 258/ນຍ, ລົງວັນທີ 24 ສິງຫາ 2017 ໂດຍມີຂອບເຂດ ແລະ ຄວາມ ຮັບຜິດຊອບສະເພາະຂອງຕົນ ດັ່ງນີ້:

- ດຳເນີນທຸລະກິດຢາປາບສັດຕູພືດ ໂດຍບໍ່ໄດ້ຮັບອະນຸຍາດ;
- ລັກລອບນຳເຂົ້າຢາປາບສັດຕູພືດ;
- ການລະເມີດອື່ນ ຕາມການສະເໜີ ຂອງອົງການຄຸ້ມຄອງວຽກງານຢາປາບສັດຕູພືດ.

**2.2. ໂຄງປະກອບການຈັດຕັ້ງ ຂອງຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບຢາປາບສັດຕູພືດ**

ຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ໄດ້ຮັບການສ້າງຕັ້ງຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ດັ່ງນີ້:

**2.2.1. ຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ຂັ້ນສູນກາງ ໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງກົມປູກຝັງ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ ຄື:**

- ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຫົວໜ້າ;
- ກົມກວດກາ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງ;
- ກົມກ່ຽວຂ້ອງ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
- ກົມກ່ຽວຂ້ອງ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
- ກົມກ່ຽວຂ້ອງ ຂອງຂະແໜງການອື່ນ ເປັນຄະນະ;
- ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງທີ່ກ່ຽວຂ້ອງ ເປັນຄະນະ.

**2.2.2. ຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ຂັ້ນແຂວງ ໄດ້ຮັບການແຕ່ງຕັ້ງຈາກເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ຊຶ່ງປະກອບດ້ວຍຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ ຄື:**

- ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ເປັນຫົວໜ້າ;
- ຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ເປັນຮອງ;
- ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ ເປັນຄະນະ;
- ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເປັນຄະນະ;
- ພະແນກການອື່ນທີ່ກ່ຽວຂ້ອງ ຂັ້ນແຂວງ ເປັນຄະນະ;
- ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ກ່ຽວຂ້ອງ ເປັນຄະນະ.

**2.2.3. ຄະນະສະເພາະກິດກວດກາ ແລະ ນຳໃຊ້ມາດຕະການ ຕໍ່ການລະເມີດລະບຽບກົດໝາຍ ກ່ຽວກັບ ຢາປາບສັດຕູພືດ ຂັ້ນເມືອງ ໄດ້ຮັບການແຕ່ງຕັ້ງຈາກເຈົ້າເມືອງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ ຊຶ່ງປະກອບດ້ວຍ ຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ ຄື:**

- ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເປັນຫົວໜ້າ;
- ໜ່ວຍງານປູກຝັງແຂວງ ແລະ ນະຄອນຫຼວງ ເປັນຮອງ;
- ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ ເປັນຄະນະ;
- ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເປັນຄະນະ;
- ຂະແໜງການອື່ນທີ່ກ່ຽວຂ້ອງ ຂັ້ນເມືອງ ເປັນຄະນະ;